# *ຫໍສະໝຸດ Rochester Public ຍິນດີຕ້ອນຮັບທ່ານ*

*ພວກເຮົາຍິນດີບໍລິການທ່ານ, ແລະຫວັງວ່າ ທ່ານຈະ ໄດ້ຮັບປະໂຫຍດ*
*ໃນສິ່ງທີ່ທາງຫໍສະໝຸດມອບໃຫ້ທ່ານ.*

**ການໃຫ້ບໍລິການແປພາສາ(ທາງໂທລະສັບ)ສໍາລັບທຸກໆພາສາ ແມ່ນ ມີບໍລິການ ທີ່ໂຕະບໍລິການທົ່ວໄປ ຢູ່ໃນຫໍສະໝຸດ..**

ຫໍສະໝຸດແມ່ນໄດ້ຮັບເງິນທຶນຈາກ ການເສຍອາກອນໃນທ້ອງຖິ່ນ. ຖ້າທ່ານ ອາໄສຢູ່ໃນ ຫລືອ້ອມຂ້າງເມືອງRochester ທ່ານປະກອບສ່ວນຊ່ວຍ ຫໍສະໝຸດ ໂດຍການເສຍ ອາກອນ. ຜູ້ທີ່ບໍ່ໄດ້ອາໄສຢູ່ໃນພື້ນທີ່, ຫລືຜູ້ທີ່ບໍ່ມີ ບັດຫໍສະໝຸດ ສາທາລະນະ ຂອງລັດ Minnesota ຈະຖືກຮ້ອງຂໍ ໃຫ້ຈ່າຍຄ່າທໍານຽມສໍາລັບຜູ້ເຂົ້າຊົມ ແກ່ຫໍສະໝຸດ.

ທ່ານຈະຕ້ອງລົງທະບຽນເຮັດບັດຫໍສະໝຸດ ເສຍກ່ອນ ຈຶ່ງຈະສາມາດໃຊ້ ອິນເຕີເນັດ ຫລືຄົ້ນຫາຈາກອຸປະກອນຕ່າງໆຢູ່ຫໍສະໝຸດ ຫລືຢູ່ຕູ້ປື້ມເຄື່ອນທີ່. ພະນັກງານຫໍສະໝຸດ ຈະຊ່ວຍເຫລືອທ່ານ ໃນການເຮັດບັດຫໍສະໝຸດ. ການຖືຄອງ ບັດຫໍສະໝຸດ ແມ່ນມີສິດ ແລະຄວາມຮັບຜິດຊອບ. ກະລຸນາຖືບັດຫໍສະໝຸດ ເມື່ອໃດກໍ່ຕາມທີ່ທ່ານປາຖະໜາ ທີ່ຈະໃຊ້ອິນເຕີເນັດ ຫລືຄົ້ນຫາຈາກອຸປະກອນຕ່າງໆ ຢູ່ຫໍສະໝຸດ. ຈົ່ງເກັບຮັກສາບັດ ດັ່ງດຽວກັບ ບັດປະຈໍາຕົວຫລືບັດຄະເລດິດ. ຫ້າມເອົາບັດໃຫ້ຄົນອື່ນຢືມ. ທ່ານຈະຕ້ອງຮັບຜິດຊອບ ສົ່ງຄືນທຸກຢ່າງທີ່ແຈ້ງຢູ່ເທິງບັດ ອີງຕາມ ວັນທີ ທີ່ຮອດກໍານົດສົ່ງ. ຖ້າຫາກ ທ່ານສົ່ງ ສິ່ງທີ່ຢືມໄປຊ້າກ່ວາກໍານົດ ຈະຕ້ອງ ໄດ້ຈ່າຍເງິນຢືມກາຍກໍານົດ. ຖ້າຫາກທ່ານສົ່ງ ສິ່ງທີ່ຢືມໄປ ບໍ່ຄົບຖ້ວນ ຈະຕ້ອງໄດ້ຈ່າຍເງິນ ໃຊ້ແທນຄືນ.

ປື້ມບັນທຶກ ຂອງຫໍສະໝຸດ ທີ່ກ່ຽວກັບ ບັນດາຊື່ຂອງຜູ້ນໍາໃຊ້ອຸປະກອນ ຫລືໝວດວິຊາໃດໜຶ່ງ ແມ່ນຖືກຈັດໄວ້ສ່ວນບຸກຄົນຕາມກົດໝາຍລັດ Minnesota.

ຖ້າທ່ານ ມີຄໍາຖາມ ກ່ຽວກັບບັດຂອງທ່ານ ຫລື ຖ້າທ່ານຕ້ອງການ ຄວາມຊ່ວຍເຫລືອ ໃນການນໍາໃຊ້ຫໍສະໝຸດ,ກະລຸນາສອບຖາມພະນັກງານຫໍສະໝຸດ ໄດ້ທີ່ໂຕະເຮັດວຽກ.

Rochester Public Library
101 2nd Street SE
507-285-8000
www.rochesterpubliclibrary.org

ອິນເຕີເນັດ ແລະຄອມພິວເຕີ ແມ່ນມີໃຫ້ບໍລິການ.

## ສິ່ງສະສົມທີ່ເປັນພາສາລາວ

ມີການສະສົມສ່ວນໜຶ່ງ ກ່ຽວກັບ ປຶ້ມ ແລະວີດີໂອຂໍ້ມູນຂ່າວສານ ເປັນພາສາລາວ ຢູ່ ຊັ້ນທີ່ ສອງ ຂອງຫໍສະໝຸດ.

## ສິ່ງສະສົມທີ່ສື່ສານໂດຍພາສາລາວ

ຫໍສະໝຸດ ມີກະແຊັດເທບ,ກະແຊັດວີດີໂອ, ໂປຣແກຣມຄອມພິວເຕີ ແລະປຶ້ມ ສຳລັບ ປະຊາຊົນ ຜູ້ທີ່ຕ້ອງການຮຽນ ພາສາອັງກິດ ຫລື ພັດທະນາ ທັກສະ ພາສາອັງກິດ. ອຸປະກອນເກືອບທັງໝົດ ຂອງຫໍສະໝຸດ ແມ່ນຢູ່ ຊັ້ນທີ່ ສອງ ຂອງຫໍສະໝຸດ ໝາຍເລກ 428.